| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບຢັ້ງຢືນ ເພື່ອຮັບຮອງບົດວິພາກເສດຖະກິດ-ເຕັກນິກໂຄງການໄຟຟ້າ | |
| ປະເພດຂອງໃບອະນຸຍາດ | ໃບຢັ້ງຢືນ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoEM-DEPP-2 | 28.09.2017 | ກົມນະໂຍບາຍ ແລະ ແຜນພະລັງງານ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບໃບອະນຸຍາດ | D - ການສະໜອງໄຟຟ້າ, ອາຍແກັສ, ອາຍຮ້ອນ ແລະ ອາກາດປັບແຕ່ງ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ບົດວິພາກເສດຖະກິດ ແມ່ນມີຈຸດປະສົງປະເມີນວ່າ ໂຄງການແມ່ນມີຄວາມເປັນໄປໄດ້ທາງດ້ານເທັກນິກ, ເສດຖະກິດ ແລະ ການເງິນ, ດັ່ງນັ້ນ ກົມຈະຕ້ອງໄດ້ກວດຄືນ ແລະ ປະເມີນຄືນຂໍ້ມູນທີ່ລະບຸໄວ້ໃນບົດວິພາກດັ່ງກ່າວ ເພື່ອຮັບປະກັນຄຸນະພາບຂອງຂໍ້ມູນດັ່ງກ່າວ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫລື ນິຕິບຸກຄົນທີ່ມີຈຸດປະສົງຈະດໍາເນີນທຸລະກິດສໍາປະທານໄຟຟ້າ ໃນ ສປປ ລາວ ໂດຍທີ່ໂຄງການດັ່ງກ່າວ ມີກໍາລັງການຜະລິດຫລາຍກວ່າ 15 MW ແລະ ໄດ້ມີການລົງນາມໃນບົດບັນທຶກຄວາມເຂົ້າໃຈ ໃນການພັດທະນາໂຄງການໄຟຟ້າກັບ ລັດຖະບານແຫ່ງ ສປປ ລາວ ທັງນີ້ພາຍໃຕ້ ບົດບັນທຶກດັ່ງກ່າວ, ບຸກຄົນ ຫລື ນິຕິບຸກຄົນດັ່ງກ່າວ ແມ່ນມີພັນທະຕ້ອງສ້າງບົດວິພາກເສດຖະກິດ ເພື່ອສຶກສາໂຄງການໄຟຟ້ານັ້ນ |
| ມີຂໍ້ມູນໃບອະນຸຍາດອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | http://www.laoenergy.la |
| ມີແບບຟອມໃບຄໍາຮ້ອງໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນກັບ ໃບອະນຸຍາດ | 1. ຜູ້ພັດທະນາໂຄງການ ຕ້ອງກະກຽມ ແລະ ນໍາສົ່ງບົດລາຍງານ ຕາມລໍາດັບ ດັ່ງນີ້: (i) ບົດລາຍງານກອບໜ້າວຽກເບື້ອງຕົ້ນ; (ii) ບົດລາຍງານຂັ້ນກາງ ຊຶ່ງຕ້ອງນໍາສົ່ງພາຍໃນ 10 ເດືອນຫລັງຈາກການລົງນາມໃນ MOU; (iii) ຮ່າງບົດລາຍງານຂັ້ນສຸດທ້າຍ ຊຶ່ງຕ້ອງນໍາສົ່ງພາຍໃນ 16 ເດືອນຫລັງຈາກການລົງນາມໃນ MOU; ແລະ (iv) ບົດລານງານສຸດທ້າຍ ຊຶ່ງຕ້ອງນໍາສົ່ງພາຍໃນ 1 |

| ຂໍ້ມູນພື້ນຖານ | |
|---|---|
| | ເດືອນພາຍຫລັງຈາກໄດ້ຮັບຄໍາເຫັນເປັນລາຍລັກອັກສອນຈາກກົມໃນສ່ວນຂອງຮ່າງບົດລາຍງານ 2. ກົມຈະອະນຸມັດ ບົດລາຍງານຂັ້ນກາງ ແລະ ບົດລາຍງານສຸດທ້າຍ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ ໃນ ການອອກໃບອະນຸຍາດ** | 10 | ກົດໝາຍກ່ຽວຂ້ອງບໍ່ໄດ້ລະບຸໄລຍະເວລາໃນການພິຈາລະນາ ແຕ່ເຈົ້າໜ້າທີ່ແຈ້ງວ່າ ໄລຍະເວລາໃນການພິຈາລະນາ ແມ່ນບໍ່ກາຍ 10 ວັນລັດຖະການ ກໍລະນີເອກະສານຄົບຖ້ວນ |
| **ຄຸນະສົມບັດຂອງຜູ້ຂໍໃບ ອະນຸຍາດ** | ບົດວິພາກເສດຖະກິດດັ່ງກ່າວ ຕ້ອງໄດ້ສ້າງໂດຍສອດຄ່ອງກັບ ບົດແນະນໍາທາງດ້ານວິຊາການທີ່ທາງກະຊວງໄດ້ປະກາດ ແລະ ນໍາໃຊ້ | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍ ໃບອະນຸຍາດ?** | ປະຕິເສດ ໃນກໍລະນີທີ່ ບົດວິພາກເສດຖະກິດດັ່ງກ່າວ ແມ່ນບໍ່ເປັນໄປຕາມເງື່ອນໄຂ, ຂໍ້ກໍານົດ ຫລື ຄຸນະພາບຕາມທີ່ກໍານົດໄວ້ໃນ ບົດແນະນໍາທາງດ້ານວິຊາການ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ບໍ່ມີ | 0 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບ ອະນຸຍາດ** | |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາ ການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 100000000.00 | 0.00 | 100000000.00 |
| **ຄໍາເຫັນ** | ອີງໃສ່: ລັດຖະດໍາລັດ 03/ປທ ຄ່າທໍານຽມ ສໍາລັບ ການອອກໃບຮັບຮອງບົດວິພາກເສດຖະກິດເຕັກນິກ ແມ່ນຄິດໄລ່ຕາມ ກໍາລັງຕິດຕັ້ງໄຟຟ້າ MW ແລະ ກໍາລັງການຜະລິດໄຟຟ້າ GWh ຂອງໂຄງການ ໃນອັດຕາ ດັ່ງນີ້: (i) ໃບຮັບຮອງຂັ້ນກາງ | | | |

| ຄ່າທໍານຽມ | |
|---|---|
| | 7,200 ກີບ x GWh + 32,000 ກີບ x MW; (ii) ໃບຮັບຮອງຂັ້ນສຸດທ້າຍ 8,500 ກີບ x GWh + 36,000 ກີບ x MW; ພາຍໃຕ້ເງື່ອນໄຂວ່າ ອັດຕາຄ່າທໍານຽມດັ່ງກ່າວ ໃຫ້ເກັບຕາມການຄິດໄລ່ຕົວຈິງ ແຕ່ບໍ່ໃຫ້ຫລຸດ 3,000,000 ກີບ ແລະ ສູງສຸດ ບໍ່ໃຫ້ເກີນ 100 ລ້ານກີບຕໍ່ໂຄງການ |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| ຄໍາເຫັນ | | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄໍາເຫັນ |
| ກົດໝາຍວ່າດ້ວຍ ໄຟຟ້າ (ສະບັບປັບປຸງ) | 03/ສພຊ | 20.12.2011 | ມາດຕາ 30 |

| ເອກະສານປະກອບ |
|---|
| ຊື່ເອກະສານ |
| ບົດວິພາກເສດຖະກິດເຕັກນິກ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 13 | 0 |